ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຂ່າວ NEWS

# ກຳມະບານຮາກຖານ ທຄຕລ
# ເຂົ້າຮ່ວມຂະບວນກ້ອນກຳລັງຍ່າງເພື່ອສຸຂະພາບ



ໃນຕອນເຊົ້າວັນທີ 30 ເມສາ 2016 ທີ່ຜ່ານມາ ສູນກາງສະຫະພັນກຳມະບານລາວ ໄດ້ຈັດຂະບວນການຍ່າງອອກກຳລັງກາຍເພື່ອສຸຂະພາບ, ເນື່ອງໃນໂອກາດວັນທີ 01 ພຶດສະພາ ***"ວັນກຳມະກອນສາກົນ ຄົບຮອບ 130 ປີ (01/05/1886-01/05/2016)"***, ໂດຍໃຫ້ກຽດເຂົ້າຮ່ວມຂອງ **ທ່ານ ດຣ. ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ**, ມີອົງການຈັດຕັ້ງກຳມະບານຮາກຖານຂອງແຕ່ລະພາກສ່ວນ, ລວມທັງກຳມະກອນຊາວຜູ້ອອກແຮງງານພາຍໃນນະຄອນຫຼວງວຽງຈັນ ເຂົ້າຮ່ວມ ຫຼາຍກວ່າ 5 ພັນຄົນເຂົ້າຮ່ວມ. ໃນນັ້ນ, ໜ່ວຍກຳມະບານຮາກຖານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນຳພາໂດຍຄະນະບໍລິຫານງານກຳມະບານ ລວມທັງສະມາຊິກ ທີ່ສັງກັດຢູ່ ສຳນັກງານໃຫຍ່, ສາຂານະຄອນຫຼວງ ແລະ ສາຂາດົງໂດກເຂົ້າຮ່ວມຫຼາຍກວ່າ 90 ຄົນ.

ຂະບວນການຍ່າງເພື່ອສຸຂະພາບໃນຄັ້ງນີ້, ໄດ້ເລີ່ມແຕ່ເວລາ 05:30-07:00 ໂມງເຊົ້າ, ຢູ່ສວນປະຕູໄຊ ຫາ ທາດຫຼວງ ນະຄອນຫຼວງວຽງຈັນ, ເຊິ່ງຈຸດປະສົງກໍ່ເພື່ອເປັນການ ສະແດງຄວາມຮູ້ບຸນຄຸນ ແລະ ລະນຶກເຖິງວັນກຳມະກອນສາກົນ ທີ່ຊາວຜູ້ອອກແຮງງານຫຼາຍກວ່າ 140 ປະເທດທົ່ວໂລກຍາດໄຊຊະນະໄດ້ຈາກນາຍທຶນໃນການອອກແຮງງານຈາກ 14-15 ຊົ່ວໂມງ/ມື້ ມາເປັນ 8 ຊົ່ວໂມງ/ມື້. ໃນພິທີດັ່ງກ່າວຍັງໄດ້ຮັບຟັງການປາຖະກະຖາເລົ່າມູນເຊື້ອຄວາມເປັນມາຂອງວັນກຳມະການສາກົນໂດຍຫຍໍ້ຈາກ **ທ່ານ ນາງ ອາລີ ວົງໜໍ່ສຳພັນ** ຮອງປະທານສູນກາງສະຫະພັນກຳມະບານລາວ ພ້ອມກ່າວເປີດພິທີ, ໃຫ້ກຽດຂຶ້ນຕັດແຖບຜ້າໂດຍ **ທ່ານ ດຣ. ບຸນທອງ ຈິດມະນີ** ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ, ພ້ອມດ້ວຍການນຳ ພັກ - ລັດ ແລະ ໄດ້ນຳພາຂະບວນກ້ອນກຳລັງຈາກພາກສ່ວນຕ່າງໆຍ່າງອອກກຳລັງກາຍເພື່ອສຸຂະພາບຢ່າງເປັນຂະບວນຟົດຟື້ນ ແລະ ເຕັມໄປດ້ວຍສີສັນສວຍງາມ ທຸກຄົນທີ່ເຂົ້າຮ່ວມຂະບວນດັ່ງກ່າວລ້ວນແຕ່ມີເບີກບານມ່ວນຊື່ນ ແລະ ມີການຖ່າຍພາບເປັນທີ່ລະລຶກຢ່າງບໍ່ຂາດສາຍ, ຊຶ່ງຂະບວນການຍ່າງເພື່ອສຸຂະພາບໃນຄັ້ງນີ້ ກໍ່ເປັນກິດຈະກຳໜຶ່ງທີ່ຊາວນະຄອນຫຼວງວຽງຈັນ ໄດ້ມີການຈັດຂຶ້ນທຸກໆປີ.

ຂຽນໂດຍ: ສົມບຸນ ສຸລິວັນ
ພາບຖ່າຍ: ວິໄລວັດ ມຸງຄຸນໄພສານ

ຕໍ່ກັບການເຂົ້າຮ່ວມຂະບວນການກ້ອນກຳລັງສະເຫຼີມສະຫຼອງວັນກຳມະກອນສາກົນຂ້າງເທິງນັ້ນ; ເຫັນໄດ້ວ່າ ກຳມະບານຣາກຖານ ທຄຕລ ພາຍໃຕ້ການຊີ້ນຳພາຂອງ ຄະນະພັກຮາກຖານ ທຄຕລ ຍາມໃດກໍ່ໄດ້ເອົາໃຈໃສ່ ປະກອບສ່ວນເຂົ້າໃນຂະບວນການວັນສຳຄັນຂອງຊາດ; ກໍ່ຄືເພື່ອສືບຕໍ່ມູນເຊື້ອອັນດີງາມຂອງຊົນຊັ້ນກຳມະກອນທີ່ຍາດມາໄດ້ໃຫ້ໝັ້ນຄົງຕະຫຼອດໄປ ແລະ ທັງເປັນການປຸກລະດົມການເມືອງແນວຄິດຂອງຊາວຜູ້ອອກແຮງງານບັນດາເຜົ່າເວົ້າລວມ, ເວົ້າສະເພາະແມ່ນແນວຄິດ ພະນັກງານ ທຄຕລ ໃຫ້ເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ເຮັດຫລ້ອນໜ້າທີ່ວຽກງານການເມືອງທີ່ພັກໄດ້ມອບໝາຍໃຫ້, ສືບຕໍ່ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນກຳລັງແຮງງານທີ່ມີລະບຽບວິໄນໃນການພັດທະນາວຽກງານຂອງຕົນ, ເສີມຂະຫຍາຍທາດແທ້ມູນເຊື້ອດີງາມຂອງຊົນຊັ້ນກຳມະກອນລາວ ແລະ ກາຍເປັນກຳລັງຫຼັກແຫຼ່ງໃນຂະບວນການສ້າງສາ ແລະ ພັດທະນາ ທຄຄຕລ ກໍ່ຄືເສດຖະກິດຂອງປະເທດຊາດ.















ຂຽນໂດຍ: ສົມບຸນ ສຸລິວັນ

ພາບຖ່າຍ: ວິໄລວັດ ມຸງຄຸນໄພສານ